ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.

-----000-----

ກະຊວງກະສິກຳ ແລະ ປ່າໄມ້

ກອງທຶນຫລຸດຜ່ອນຄວາມທຸກຍາກ (ຫລຍ) ນະຄອນຫລວງວຽງຈັນ, ວັນທີ 31 ມັງກອນ 2017

# ບົດບັນທຶກກອງປະຊຸມສະພາບໍລິຫານ ຂອງກອງທຶນຫລຸດຜ່ອນຄວາມທຸກຍາກ ສະໄໝສາມັນຄັ້ງທີ 22, ທີ່ ນະຄອນຫລວງວຽງຈັນ, (31 ມັງກອນ 2017)

ກອງປະຊຸມສະພາບໍລິຫານ ຂອງກອງທຶນຫລຸດຜ່ອນຄວາມທຸກຍາກ ສະໄໝສາມັນ ຄັ້ງທີ 22 ໄດ້ຈັດຂຶ້ນໃນວັນທີ 31 ມັງກອນ 2017 ທີ່ ໂຮງແຮມດອນຈັນພາເລສ, ນະຄອນຫລວງວຽງຈັນ. ພາຍໃຕ້ການເປັນປະທານຂອງ ທ່ານ ປອ. ລຽນ ທິແກ້ວ, ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້, ທັງເປັນປະທານສະພາບໍລິຫານຂອງກອງທຶນຫລຸດຜ່ອນຄວາມທຸກຍາກ, ພ້ອມດ້ວຍກຳມະການສະພາບໍລິຫານ ທີ່ມາຈາກບັນດາກະຊວງ ແລະ ແຂວງເປົ້າໝາຍຂອງ ຫລຍ, ກົມ, ກອງ ແລະ ຈາກພະແນກກະສິກຳ ແລະ ປ່າໄມ້ແຂວງ, ຄະນະຮັບຜິດຊອບ ຫລຍ ສູນກາງ, ຜູ້ປະສານງານ ຫລຍ 10 ແຂວງ ໄດ້ເຂົ້າຮ່ວມຢ່າງພ້ອມພຽງກັນ. ພ້ອມກັນນັ້ນ ກອງປະຊຸມສະພາບໍລິຫານ ກໍຍັງໄດ້ຮັບກຽດຕ້ອນຮັບການເຂົ້າຮ່ວມຜູ້ຕາງໜ້າຈາກທະນາຄານໂລກ ແລະ ອົງການພັດທະນາຮ່ວມຂອງສະວິດເຊີແລນ, ເຊິ່ງມີຜູ້ແທນທັງໝົດ 62 ຄົນ, ຍິງ 11 ຄົນ.

ຈຸດປະສົງກອງປະຊຸມໃນຄັ້ງນີ້ແມ່ນເພື່ອຕີລາຄາ ຜົນຂອງການຈັດຕັ້ງປະຕິບັດ ຫລຍ 2 ໄລຍະ 5 ປີຜ່ານມາ (2012-2016) ແລະ ຜ່ານແຜນການ-ແຜນດຳເນີນງານ ຫລຍ 3 (2017-2019). ກອງປະຊຸມໄດ້ດຳເນີນໄປຕາມວາລະກອງປະຊຸມ ເປັນເວລາ ເຄິ່ງມື້ ທີ່ເຕັມໄປດ້ວຍບັນຍາກາດອັນຟົດຟື້ນ, ດ້ວຍຄວາມຮັບຜິດຊອບສູງ, ມີການສົນທະນາ ແລະ ແລກປ່ຽນຄວາມຄິດເຫັນທີ່ມີລັກສະນະສ້າງສັນ. ກອງປະຊຸມສະພາບໍລິຫານໃນຄັ້ງນີ້ຍັງໄດ້ພິຈາລະນາ ທິດທາງແຜນການ ແລະ ມາດຕະການ ໃນການຈັດຕັ້ງປະຕິບັດ ຫລຍ ໄລຍະ 3 ເຊິ່ງສາມາດສະຫລຸບໄດ້ດັ່ງລຸ່ມນີ້:

1. ກອງປະຊຸມໄດ້ຮັບຟັງການອ່ານຜ່ານ ຂໍ້ຕົກລົງຂອງນາຍົກລັດຖະມົນຕີ ວ່າດ້ວຍການແຕ່ງຕັ້ງ ປະທານສະພາບໍລິຫານກອງທຶນຫລຸດຜ່ອນຄວາມທຸກຍາກ ໂດຍໄດ້ແຕ່ງຕັ້ງ ທ່ານ ປອ. ລຽນ ທິແກ້ວ ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ເປັນປະທານສະພາບໍລິຫານ ກອງທຶນຫລຸດຜ່ອນຄວາມທຸກຍາກ.
2. ລາຍຊື່ຄະນະກຳມະການສະພາບໍລິຫານ ຫລຍ ແມ່ນຍັງບໍ່ທັນຄົບຖ້ວນ ເນື່ອງຈາກຍັງມີບາງຂະແໜງການທີ່ຍັງບໍ່ທັນມີການແຕ່ງຕັ້ງ ແລະ ສົ່ງລາຍຊື່ແຈ້ງເປັນທາງການ ຊຶ່ງປະທານກອງປະຊຸມໄດ້ສະເໜີໃຫ້ພາກສ່ວນທີ່ບໍ່ທັນສົ່ງລາຍຊື່ ໄດ້ຮີບຮ້ອນແຕ່ງຕັ້ງ ແລະ ສົ່ງໃຫ້ຄະນະຮັບຜິດຊອບໂດຍໄວ ເພື່ອຈະໄດ້ແຈ້ງຢ່າງເປັນທາງການ.

3. ກອງປະຊຸມ ໄດ້ຮັບຟັງການນຳສະເໜີ ແລະ ຕີລາຄາຜົນໄດ້ຮັບ ຂອງການຕັ້ງປະຕິບັດວຽກງານ ທລຍ 2 ທີ່ໄດ້ເປັນບົດຮຽນສຳຄັນ ເພື່ອການຈັດຕັ້ງປະຕິບັດ ທລຍ 3 ໃຫ້ປະສິບຜົນສຳເລັດທີ່ສຸດ ລວມທັງທິດທາງແຜນການດຳເນີນໂຄງການ ທລຍ 3 ໂດຍ ທ່ານ ບຸນກອ້າງ ສຸວັນນະພັນ, ຜູ້ອຳນວຍການບໍລິຫານ ທລຍ.

4. ພ້ອມດຽວກັນນີ້ ກອງປະຊຸມຍັງໄດ້ຮັບຟັງຄຳເຫັນຈາກຜູ້ໃຫ້ທຶນ ຕໍ່ກັບການຈັດຕັ້ງປະຕິບັດຂອງ ທລຍ 2 ລວມທັງແຜນສຳລັບ ທລຍ 3 ຊຶ່ງຕາງໜ້າຈາກທະນາຄານໂລກ ທ່ານ ອິອິກ ໄດ້ເນັ້ນໜັກວ່າ ທລຍ 3 ແມ່ນມີກຳນົດ 3 ປີ ຊຶ່ງບໍ່ແມ່ນໄລຍະທີ່ຍາວ ຈຶ່ງສະເໜີໃຫ້ຄະນະຮັບຜິດຊອບໂຄງການໄດ້ເລີ່ມປຶກສາຫາລື ກ່ຽວກັບແຜນການ ທລຍ ໃນຕໍ່ໜ້າ ພາຍຫລັງ ທລຍ 3 ສິ້ນສຸດລົງ. ພ້ອມດຽວກັນນີ້ ກໍ່ຍັງໄດ້ເນັ້ນໜັກ ກ່ຽວກັບການປະກອບສ່ວນຂອງລັດຖະບານເຂົ້າໃນການຈັດຕັ້ງປະຕິບັດຂອງ ທລຍ ຊຶ່ງຈະຕ້ອງໃຫ້ຖ່ວງທັນ ແລະ ສອດຄ່ອງກັບແຜນງົບປະມານ.

5. ຕາງໜ້າຈາກອົງການຮ່ວມມືເພື່ອການພັດທະນາຂອງປະເທດສະວິດເຊີແລນ (SDC) ໄດ້ຊົມເຊີຍການຈັດຕັ້ງປະຕິບັດຂອງ ທລຍ ຊຶ່ງມີຜົນກະທົບດ້ານບວກຕໍ່ຊຸມຊົນ ໂດຍສະເພາະແມ່ນຕໍ່ແມ່ຍິງ ແລະ ຊົນເຜົ່າຢູ່ໃນລາວ ຊຶ່ງສອດຄ່ອງກັບເປົ້າໝາຍຂອງອົງການ SDC. ນອກຈາກນີ້ ທ່ານ ນ. ມິເກວ ຣາຣາຣິ ຍັງໄດ້ປະກອບຄຳເຫັນ ກ່ຽວກັບການປະກອບສ່ວນຂອງລັດຖະບານ ເຂົ້າໃນການຈັດຕັ້ງປະຕິບັດຂອງ ທລຍ ຊຶ່ງທ່ານເຫັນວ່າເປັນພັນທະ ແລະ ການປະກອບສ່ວນທີ່ສຳຄັນຕາມສັນຍາຂອງໂຄງການ.

6. ທ່ານ ສິດທິສອນ ເທບພາສີ, ຫົວໜ້າກົມການເງິນຕ່າງປະເທດ, ກະຊວງການເງິນ ໄດ້ຢັ້ງຢືນກ່ຽວກັບທຶນປະກອບສ່ວນຂອງລັດຖະບານວ່າ ກະຊວງການເງິນ ແມ່ນພ້ອມທີ່ຈະປະຕິບັດພັນທະ ແຕ່ໃນຂະນະດຽວກັນໂຄງການກໍ່ຕ້ອງໄດ້ກະກຽມແຜນ ເພື່ອເອົາເຂົ້າໃນແຜນງົບປະມານຂອງລັດຖະບານໃຫ້ຖືກຕ້ອງຄົບຖ້ວນ ແລະທັນເວລາ ກ່ອນສິ່ງໃຫ້ສະພາແຫ່ງຊາດອະນຸມັດຮັບຮອງ.

7. ທ່ານ ປອ. ຢ່າງກູ້ ຢ່າງລືໄຊ, ຫົວໜ້າກົມແຜນການ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໄດ້ໃຫ້ຄຳເຫັນວ່າຂອບເຂດຂະແໜງການທີ່ ທລຍ ຮັບຜິດຊອບແມ່ນກວ້າງເກີນໄປ (ສຶກສາ, ສາທາ, ໂຍທາ, ນ້ຳສະອາດ, ກະສິກຳ) ໃນໄລຍະຍາວສະເໜີໂຄງການໄດ້ຄົ້ນຄວ້າຄືນວ່າ ຄວນເນັ້ນໜັກໃສ່ວຽກງານໃດເປັນຕົ້ນຕໍ ພ້ອມດຽວກັນນີ້ ຖ້າເປັນໄປໄດ້ສະເໜີໃຫ້ ທລຍ 3 ມີກຳນົດເຖິງປີ 2020 ເພື່ອໃຫ້ສອດຄ່ອງກັບແຜນ 8 ຂອງລັດຖະບານ ຊຶ່ງມີແຜນຮອດປີ 2020. ກ່ຽວກັບການກຳນົດຈຸດສຸມໃນການໃຫ້ການສະໜັບສະໜູນ ສະເໜີໃຫ້ພິຈາລະນາບັນດາຈຸດສຸມທີ່ເປັນບຸລິມະສິດ ໂດຍໃຫ້ສອດຄ່ອງກັບຈຸດສຸມພັດທະນາຂອງລັດຖະບານ. ສຳລັບວຽກງານການສ້າງຂີດຄວາມສາມາດ ຢາກໃຫ້ລະບຸລະອຽດວ່າແມ່ນດ້ານໃດ ເຊັ່ນ: ສີມືແຮງງານ, ການປະກອບການ, ການສ້າງລາຍໄດ້ ແລະ ອື່ນໆ. ສຳລັບການຈັດສັນງົບປະມານເຂົ້າໃນວຽກງານປັບປຸງຊີວິດການເປັນຢູ່ ຈຳນວນ 2,5% ນັ້ນ ເຫັນວ່າຍັງຕ່ຳ.

8. ທ່ານ ຄຳຜອຍ ອັນນະສານ, ຮອງເຈົ້າແຂວງ ແຂວງຜົ້ງສາລີ, ໄດ້ມີຄາເຫັນກ່ຽວກັບບົດຮຽນທີ 5 ຂອງ ທລຍ 2 ຊຶ່ງໄດ້ໃຫ້ຄຳເຫັນວ່າ ຄວນເນັ້ນໜັກໃຫ້ມີການຜະລິດເປັນສິນຄ້າ ແທນທີ່ຈະຜະລິດພຽງແຕ່ຈຳນວນນ້ອຍ ຊຶ່ງຈະບໍ່ກໍ່ໃຫ້ ເກີດຄວາມຮັ່ງມີ ຈະຮັ່ງມີໄດ້ຕ້ອງໄດ້ຜະລິດອອກສູ່ຕະຫລາດ. ພ້ອມດຽວກັນນີ້ ກໍ່ສະເໜີໃຫ້ຄົ້ນຄວ້າຄືນ ກ່ຽວກັບການກຳນົດເພດານງົບປະມານ ທີ່ກຳນົດຕາມຈຳນວນປະຊາກອນ ເນື່ອງຈາກເຫັນວ່າຜູ້ທີ່ທຸກຍາກທີ່ສຸດແມ່ນຢູ່ຫ່າງໄກສອກຫລີກ ຈຳນວນປະຊາກອນອາດບໍ່ຫລາຍ ແຕ່ກໍ່ມີຄວາມຕ້ອງການການຊ່ວຍເຫລືອຫລາຍ. ກ່ຽວກັບການລົງທຶນຂອງລັດຖະບານທີ່ສຸມໃສ່ການກໍ່ສ້າງໂຄງລ່າງພື້ນຖານຈຳນວນ 73% ສະເໜີໃຫ້ສຸມໃສ່ຕື່ມກ່ຽວກັບການປົກປັກຮັກສາ ໂດຍປະສານສົມທົບກັບຂະແໜງການກ່ຽວຂ້ອງ. ເພີ່ມການເສີມສ້າງຄວາມອາດສາມາດໃຫ້ແກ່ພະນັກງານທ້ອງຖິ່ນຕື່ມ.

9. ທ່ານ ກອງແກ້ວ ວົງປະເສີດ, ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ, ໄດ້ໃຫ້ຄໍາເຫັນກ່ຽວກັບການປະກອບສ່ວນພັນທະຂອງລັດຖະບານ ເຫັນວ່າຂອດການຈັດຕັ້ງປະຕິບັດ ແລະ ແຜນງົບປະມານທີ່ຜ່ານມາແມ່ນບໍ່ສອດຄ່ອງກັນ ກໍ່ຄືໂຄງການແມ່ນຂຶ້ນແຜນປະຈໍາປີ ແຕ່ແຜນຂອງລັດຖະບານແມ່ນສີກປີ.

10. ທ່ານ ນ. ບັນດິດ ປະທຸມວັນ, ສູນກາງສະຫະພັນແມ່ຍິງລາວ ເຫັນໄດ້ການມີສ່ວນຮ່ວມຂອງແມ່ຍິງເຂົ້າໃນການຈັດຕັ້ງປະຕິບັດຂອງ ທລຍ. ສະເໜີໃຫ້ມີການປັບປຸງສູນກະສິກໍາຂັ້ນແຂວງ, ເມືອງ ໃຫ້ມີການຝຶກອົບຮົມການຜະລິດເປັນສິນຄ້າ, ການຝຶກອົບຮົມວິຊາຊີບດ້ານໂພຊະນາການ ເຮັດແນວໃດ ເພື່ອຫລຸດຜ່ອນອັດຕາການຂາດສານອາຫານຢູ່ໃນເດັກ ຊຶ່ງໃນຫລາຍເຂດຊົນນະບົດ ແມ່ນຢູ່ໃນຂັ້ນທີ່ໜ້າເປັນຫ່ວງ. ນອກຈາກນີ້ ກໍ່ຍັງໄດ້ສະເໜີໃຫ້ມີການສົ່ງເສີມການສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ ໂດຍສະເພາະແມ່ນແມ່ຍິງ ໃນດ້ານຕ່າງໆ ເຊັ່ນ: ການປຸງແຕ່ງອາຫານ ເນື່ອງຈາກເດັກນ້ອຍຈະກິນອາຫານທີ່ຄົບໝວດໝູ່ໄດ້ ກໍ່ຂຶ້ນກັບຜູ້ເປັນແມ່ ດັ່ງນັ້ນຄວນເອົາໃຈໃສ່ສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ.

11. ທ່ານ ເຢຍເກີຢ່າ ທໍ່ຈໍ່ຈົ່ງຕົວ, ຮອງປະທານ ສູນກາງແນວລາວສ້າງຊາດ ໄດ້ສະແດງຄວາມຊົມເຊີຍຕໍ່ຜົນສໍາເລັດຂອງ ທລຍ ຊຶ່ງທ່ານໄດ້ເນັ້ນໜັກ ກ່ຽວກັບເລື່ອງຮີດຄອງປະເພນີຂອງຊົນເຜົ່າ ໂດຍສະເໜີໃຫ້ມີການປະສານສົມທົບກັບທ້ອງຖິ່ນ ເຮັດແນວໃດ ເພື່ອຫລຸດຜ່ອນບັນຫາທີ່ກີດໜ່ວງການພັດທະນາຊົນນະບົດທີ່ຕິດພັນກັບຮີດຄອງປະເພນີ. ພ້ອມດຽວກັນນີ້ ກໍ່ຍັງເຫັນວ່າການນໍາໃຊ້ພາສາກາງ ຍັງເປັນບັນຫາຂອງປະຊາຊົນຊົນເຜົ່າທີ່ຢູ່ຫ່າງໄກສອກຫລີກ ດັ່ງນັ້ນ ຈຶ່ງສະເໜີໃຫ້ມີການຄົ້ນຄວ້າກ່ຽວກັບບັນຫານີ້ດ້ວຍ.

12. ພາຍຫລັງຮັບຟັງຄໍາຄິດຄໍາເຫັນ ແລະ ຂໍ້ສະເໜີຂອງກອງປະຊຸມແລ້ວ ທ່ານປະທານກອງປະຊຸມໄດ້ສະຫລຸບ ແລະ ມີຄໍາເຫັນຕໍ່ຂໍ້ສະເໜີຕ່າງໆດັ່ງນີ້:

    ກ). ສໍາລັບຂອບເຂດການຈັດຕັ້ງປະຕິບັດຂອງ ທລຍ ລັດຖະບານ ແລະ ຜູ້ໃຫ້ທຶນໄດ້ຮັບຮອງແລ້ວ ຊຶ່ງບໍ່ສາມາດປ່ຽນແປງໄດ້ ໂດຍສະເພາະ ທລຍ 3 ແຕ່ປີ 2017-2019 ກວມເອົາ 10 ແຂວງ 43 ເມືອງ ແລະ 263 ກຸ່ມບ້ານ ຊຶ່ງເປັນເຂດພື້ນທີ່ທຸກຍາກທີ່ສຸດ.

    ຂ). ສໍາລັບແຜນການຈັດຕັ້ງປະຕິບັດປີ 2017 ຂອງ ທລຍ ແມ່ນໄດ້ເອົາເຂົ້າແຜນງົບປະມານຂອງລັດຖະບານແລ້ວ.

    ຄ). ສໍາລັບເປົ້າໝາຍການຈັດຕັ້ງປະຕິບັດຂອງ ທລຍ ອາດຈະແມ່ນຈຸດສຸມດຽວກັນ ຫລື ແຕກຕ່າງຈາກເຂດຈຸດສຸມຂອງລັດຖະບານ ແຕ່ເປົ້າໝາຍຫລັກແມ່ນບັນດາບ້ານທຸກຍາກທີ່ຢູ່ຫ່າງໄກສອກຫລີກ.

    ງ). ຮຽກຮ້ອງໃຫ້ ທລຍ ຂຶ້ນແຜນໃຫ້ສອດຄ່ອງກັບແຜນງົບປະມານຂອງລັດຖະບານໃນແຕ່ລະປີ ແລະ ໃຫ້ທັນກັບເວລາ.

    ຈ). ສະເໜີໃຫ້ຜູ້ອໍານວຍການບໍລິຫານ ທລຍ ໄດ້ປະສານສົມທົບກັບກະຊວງການເງິນ ເພື່ອນໍາໃຊ້ງົບປະມານໃຫ້ມີໝາກຜົນທີ່ສຸດ.

    ສ). ສະເໜີໃຫ້ຜູ້ອໍານວຍການບໍລິຫານ ທລຍ ພ້ອມດ້ວຍຄະນະກໍາມະການສະພາບໍລິຫານ ໄດ້ຄົ້ນຄວ້າ ກ່ຽວກັບງົບປະມານ (ເບ້ຍລ້ຽງ) ຂັ້ນທ້ອງຖິ່ນ.

    ຊ). ສະແດງຄວາມຂອບໃຈຕໍ່ຜູ້ໃຫ້ທຶນ ທີ່ໄດ້ໃຫ້ຄວາມໄວ້ເນື້ອເຊື່ອໃຈ ກະຊວງກະສິກໍາ ແລະ ປ່າໄມ້ ໃນການຊີ້ນໍາ ທລຍ ແລະ ທີ່ໄດ້ສືບຕໍ່ສະໜັບສະໜູນທຶນແກ່ ທລຍ.

ກອງປະຊຸມສະພາບໍລິຫານຄັ້ງທີ 22 ທີ່ນະຄອນຫລວງວຽງຈັນ ໄດ້ປິດລົງຢ່າງເປັນທາງການໃນເວລາ 12:00 ໂມງຂອງມື້ດຽວກັນ ວັນທີ 31 ມັງກອນ 2017.

<u>ຮັບຮູ້ ແລະ ເຫັນດີຈາກ</u>

ວຽງ ທິແກ້ວ
ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້,
ປະທານສະພາບໍລິຫານຂອງກອງທຶນຫລຸດຜ່ອນຄວາມທຸກຍາກ

<u>ຜູ້ບັນທຶກກອງປະຊຸມ</u>

ຜູ້ອຳນວຍການບໍລິຫານ
ກອງທຶນຫລຸດຜ່ອນຄວາມທຸກຍາກ